ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ                    ເລກທີ 0036/ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 7 ສິງຫາ 2017

## ແຈ້ງການ

ເຖິງ: - ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ;
- ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ;
- ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ.

ເລື່ອງ: ຕິດຕາມ, ກວດກາ ແລະ ຊອກຮູ້ ແຫຼ່ງທຶນທີ່ນຳມາຊື້ຮຸ້ນ ໃນຕະຫຼາດທຶນລາວ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກ ສະບັບ ເລກທີ 013/ຄຄຊ ລົງວັນທີ 17 ທັນວາ 2013;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການສ້າງຕັ້ງ ແລະ ການເຄື່ອນໄຫວຂອງບໍລິສັດຫຼັກຊັບ ສະບັບເລກທີ 002/ຄຄຊ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການອອກຈຳໜ່າຍຮຸ້ນ ສະບັບເລກທີ 018/ຄຄຊ, ລົງວັນທີ 27 ກໍລະກົດ 2015;
- ອີງຕາມ ທິດຊີ້ນຳຂອງທ່ານ ຜູ້ອຳນວຍການ, ຮອງປະທານ ຄຄຊ ຜູ້ປະຈຳການ ຄັ້ງວັນທີ 01 ສິງຫາ 2017.

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຂໍແຈ້ງມາຍັງບັນດາບໍລິສັດຫຼັກຊັບ ໃຫ້ມີການຕິດຕາມ, ຊອກຮູ້ ລູກຄ້າ ແລະ ບັນດາແຫຼ່ງທຶນທີ່ຜູ້ລົງທຶນນຳເຂົ້າມາຊື້ຮຸ້ນໃນຕະຫຼາດທຶນລາວ. ຖ້າກໍລະນີ ສົງໄສ ຫຼື ພົບເຫັນ ແຫຼ່ງທຶນ ດັ່ງກ່າວ ໄດ້ມາຈາກການກະທຳຜິດລະບຽບກົດໝາຍ ແມ່ນໃຫ້ບໍລິສັດຫຼັກຊັບ ລາຍງານມາຍັງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບໍລິສັດຫຼັກຊັບ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຈິດໃຈຂອງແຈ້ງການສະບັບນີ້ ຢ່າງ ເຂັ້ມງວດ.

ຫົວໜ້າສຳນັກງານ

ຄະນະກຳມະການຄຸ້ມຄອງຫຼັກຊັບ
ສຳນັກງານ ຄຄຊ

ສາຍສະໝອນ ຈັນທະຈັກ